# ພຣະທັມນາງຮູດ


| 1 | 2 | 3 | 4 |
|---|---|---|---|


## ຮູດ
## RUTH

### 1 ເອລີເມເລກກັບຄອບຄົວໄປອາໄສຢູ່ປະເທດໂມອາບ
Elimelech’s Family Goes to Moab

1 ໃນຄາວພວກຜູ້ຕັດສິນປົກຄອງພວກອິສຣາເອນຢູ່ນັ້ນ ໄດ້ມີການອຶດຢາກເກີດຂຶ້ນໃນປະເທດ
2 ຈຶ່ງເປັນເຫດໃຫ້ຊາຍຄົນນຶ່ງຊື່ວ່າ ເອລີເມເລກ ພ້ອມກັບນາງນາໂອມີຜູ້ເປັນພັຣຍາ ແລະລູກຊາຍສອງຄົນຄື ມາໂລນ ແລະກີລີໂອນ
ໜີຈາກເມືອງເບັດເລເຮັມຣາຊອານາຈັກຢູດາ ໄປອາໄສຢູ່ໃນປະເທດໂມອາບ ພວກເຂົາເປັນຄົນເອຟຣາທາ
3 ຢູ່ຕໍ່ມາ ເອລີເມເລກກໍຕາຍໄປ ນາງນາໂອມີຜູ້ເປັນເມັຽຈຶ່ງໃຊ້ຊີວິດຢູ່ກັບລູກຊາຍທັງສອງ
4 ຕໍ່ມາອີກບໍ່ດົນ ລູກຊາຍທັງສອງກໍໄດ້ແຕ່ງງານກັບຍິງສາວຊາວໂມອາບ ຄືນາງໂອປາ ແລະນາງຮູດ ພວກເຂົາໄດ້ພາກັນຕັ້ງຖິ່ນຖານຢູ່
ທີ່ນັ້ນປະມານສິບປີ ແລ້ວມາໂລນແລະກີລີໂອນກໍຕາຍໄປອີກ
5 ນາງນາໂອມີຈຶ່ງໃຊ້ຊີວິດຢູ່ກັບລູກສະໃພ້ທັງສອງ

### ນາໂອມີແລະນາງຮູດກັບຄືນເມືອ
Naomi and Her Moabite Daughters-in -Law

6 ຄັນຕໍ່ມາ ນາງນາໂອມີກໍໄດ້ຍິນຂ່າວວ່າ ພຣະຜູ້ເປັນເຈົ້າໄດ້ຊົງໂຜດປະທານເຂົ້າປາອາຫານແກ່ຊາວເມືອງເບັດເລເຮັມແລ້ວ
7 ນາງພ້ອມດ້ວຍລູກສະໃພ້ທັງສອງຈຶ່ງຕຽມຕົວອອກເດີນທາງມຸ່ງໜ້າຄືນສູ່ເມືອງເບັດເລເຮັມຣາຊອານາຈັກຢູດາ
8 ໃນລະຫວ່າງເດີນທາງໄປນັ້ນ ນາງນາໂອມີໄດ້ເວົ້າກັບລູກສະໃພ້ທັງສອງວ່າ, “ຈົ່ງພາກັນກັບຄືນເມືອຢູ່ບ້ານພໍ່ແມ່ຂອງພວກເຈົ້າສາ
ແລະຂໍໃຫ້ພຣະຜູ້ເປັນເຈົ້າຊົງໂຜດປະທານຄວາມຜາສຸກໃຫ້ແກ່ພວກເຈົ້າເໝືອນດັ່ງທີ່ພວກເຈົ້າເຄີຍເຮັດແກ່ແມ່ ແລະແກ່ຜູ້ທີ່ຕາຍ
ໄປແລ້ວນັ້ນ
9 ນອກນີ້ ຂໍໃຫ້ພຣະຜູ້ເປັນເຈົ້າຊົງໂຜດປະທານຄວາມສງົບສຸກ ເມື່ອເວລາພວກເຈົ້າມີຄອບຄົວໃໝ່” ຫລັງຈາກນັ້ນ ນາງນາໂອມີກໍ
ກອດຈູບສັ່ງລາລູກສະໃພ້ທັງສອງດ້ວຍຄວາມສົງສານ ເຂົາທັງສອງຈຶ່ງຮ້ອງໄຫ້ດ້ວຍຄວາມອາລັຍອາວອນ
10 ພ້ອມທັງໄດ້ເວົ້າກັບແມ່ຍ່າວ່າ, “ພວກລູກຈະບໍ່ເມືອ ຈະໄປຢູ່ນຳແມ່ ແລະພີ່ນ້ອງຂອງແມ່”
11 ນາງນາໂອມີຂໍຮ້ອງຕື່ມອີກວ່າ, “ຈົ່ງກັບຄືນເມືອບ້ານຂອງພວກລູກສາ ຢາກໄປນຳແມ່ເຮັດຫຍັງ ຫລືພວກລູກຄິດວ່າແມ່ຍັງມີ
ລູກຊາຍທີ່ພໍຈະໃຫ້ພວກເຈົ້າໄດ້ແຕ່ງງານນຳອີກບໍ່?
12 ຈົ່ງກັບຄືນເມືອເສັຽເທີນ ແມ່ນີ້ກໍເຖົ້າກາຍຍາມຈະແຕ່ງງານໃໝ່ອີກແລ້ວ ສົມມຸດວ່າ ແມ່ຈະແຕ່ງງານໃນຄືນນີ້ແລ້ວມີລູກຊາຍໃໝ່
ອີກ
13 ພວກລູກກໍຈະພາກັນຢູ່ຖ້າຈົນເຂົາໃຫຍ່ ແລ້ວແຕ່ງງານກັບເຂົາອີກຫລື ລູກຈະບໍ່ແຕ່ງງານກັບຄົນອື່ນອີກຫລື ເປັນໄປບໍ່ໄດ້ດອກລູກ
ເອີຍ, ແມ່ມີຄວາມສົງສານພວກເຈົ້າຫລາຍ ຍ້ອນວ່າການກະທຳຂອງແມ່ອາດເປັນທີ່ບໍ່ພໍພຣະທັຍພຣະເຈົ້າ”
14 ເມື່ອໄດ້ຍິນແມ່ຍ່າເວົ້າດັ່ງນັ້ນ ພວກເຂົາກໍພາກັນຮ້ອງໄຫ້ອີກ ແລ້ວນາງໂອປາໄດ້ກອດຈູບຍ່າ ແລະອຳລາກັບຄືນໄປຫາພີ່ນ້ອງຂອງ
ຕົນ ສ່ວນນາງຮູດບໍ່ຍອມໜີຈາກຍ່າເດັດຂາດ
15 ນາງນາໂອມີຈຶ່ງເວົ້າຕໍ່ນາງຮູດວ່າ, “ເບິ່ງດູ ນາງໂອປາກໍໄດ້ກັບຄືນໄປຫາພີ່ນ້ອງ ແລະພຣະເຈົ້າຂອງເຂົາທີ່ບ້ານເກົ່າແລ້ວ”
16 ແຕ່ນາງຮູດໄດ້ຕອບຍ່າວ່າ, “ຢ່າຮ້ອງຂໍໃຫ້ຂ້ານ້ອຍເຊົາຕິດຕາມແລະຈາກແມ່ຍ່າໄປທ້ອນ ແມ່ໄປທີ່ໃດລູກກໍຈະໄປທີ່ນັ້ນ ແມ່ຢູ່ບ່ອນ
ໃດລູກກໍຂໍຢູ່ບ່ອນນັ້ນດ້ວຍ ຍາດພີ່ນ້ອງຂອງແມ່ກໍແມ່ນຍາດພີ່ນ້ອງຂອງລູກ ພຣະເຈົ້າຂອງແມ່ກໍແມ່ນພຣະເຈົ້າຂອງລູກ
17 ແມ່ຕາຍຢູ່ບ່ອນໃດ ລູກກໍຂໍຕາຍຢູ່ບ່ອນນັ້ນ ແລະສົບຂອງລູກຈະຝັງຢູ່ທີ່ນັ້ນດ້ວຍ ຖ້າຂ້ານ້ອຍປະແມ່ໄປກ່ອນຕາຍ ກໍຂໍໃຫ້ພຣະເຈົ້າ
ຊົງລົງໂທດຢ່າງໜັກ”

18 ເມື່ອນາງນາໂອມີເຫັນນາງຣູດມີຄວາມຕັ້ງໃຈໄປກັບຕົນແທ້ ນາງກໍບໍ່ເວົ້າຫຍັງອີກ

19 ທັງສອງໄດ້ພາກັນເດີນທາງໄປຈົນເຖິງເມືອງເບັດເລເຮັມ ເມື່ອເຂົາເຂົ້າໄປເຖິງເມືອງນັ້ນ ຊາວເມືອງກໍພາກັນຕື່ນເຕັ້ນທີ່ເຫັນນາງກັບມາ

20 ພວກຜູ້ຍິງຈຶ່ງຖາມກັນວ່າ, "ນີ້ບໍ່ແມ່ນນາງນາໂອມີບໍ່?" ນາງນາໂອມີຈຶ່ງຕອບເຂົາວ່າ, "ຢ່າເອີ້ນຂ້ອຍວ່ານາງນາໂອມີອີກ ຈົ່ງເອີ້ນວ່າມາຣາ ເພາະວ່າພຣະເຈົ້າຜູ້ມີອຳນາດອັນຍິ່ງໃຫຍ່ຊົງໃຫ້ຂ້ອຍເຕັມໄປດ້ວຍຄວາມຂົມຂື່ນ

21 ຂ້ອຍຈາກທີ່ນີ້ໄປດ້ວຍຄວາມພ້ອມພຽງ ແຕ່ພຣະເຈົ້າໄດ້ໃຫ້ຂ້ອຍກັບມາມືເປົ່າ ຍ້ອນວ່າພຣະເຈົ້າຊົງລົງໂທດຂ້ອຍ ແລະປະທານຄວາມທຸກຍາກລຳບາກໃຫ້ແກ່ຂ້ອຍ ສະນັ້ນ ເປັນຫຍັງຈຶ່ງເອີ້ນຂ້ອຍວ່າ ນາໂອມີ ຜູ້ຊົມຊື່ນຍິນດີ

22 ນາງນາໂອມີກັບນາງຣູດຊາວເມືອງໂມອາບລູກສະໃພ້ຂອງນາງ ໄດ້ກັບມາເຖິງເມືອງເບັດເລເຮັມ ພໍດີກັບເວລາຕົ້ນຣະດູກ່ຽວເຂົ້າ

## 2 ນາງຣູດເກັບຮວງເຂົ້າເຮັ່ຍທີ່ທົ່ງນາຂອງໂບອັສ

Ruth Meets Boaz

1 ທີ່ເມືອງເບັດເລເຮັມ ນາງນາໂອມີໄດ້ມີພີ່ນ້ອງທາງຜົວຢູ່ຜູ້ນຶ່ງຊື່ ໂບອັສ ທ່ານຜູ້ນີ້ເປັນຄົນຮັ່ງມີ ແລະມີອິດທິພົນ

2 ຢູ່ຕໍ່ມາ ນາງຣູດໄດ້ເວົ້າກັບຍ່າວ່າ, "ແມ່ ຂ້ານ້ອຍຂໍໄປເກັບຮວງເຂົ້າຕົກເຮັ່ຍຢູ່ຕາມທົ່ງນາ ຂ້ານ້ອຍຈະເກັບເອົາຕາມຫລັງຜູ້ທີ່ອະນຸຍາດໃຫ້ເກັບ" ນາງນາໂອມີຈຶ່ງຕອບວ່າ, "ຈົ່ງໄປສາລູກເອີຍ"

3 ແລ້ວນາງກໍອອກໄປໃນທົ່ງນາຫາເກັບເອົາຮວງເຂົ້າເຮັ່ຍຕາມຫລັງພວກກ່ຽວເຂົ້າ ໂດຍບັງເອີນນາທີ່ບ່ອນນາງເກັບຮວງເຂົ້ານັ້ນ ແມ່ນນາຂອງໂບອັສພີ່ນ້ອງຂອງເອລີເມເລກ

4 ໃນຂນະນັ້ນ ໂບອາດໄດ້ອອກມາແຕ່ເມືອງເບັດເລເຮັມ ເພື່ອເບິ່ງຄົນເຮັດວຽກໃນນາ ທ່ານໄດ້ກ່າວອວຍພອນໃຫ້ພວກເຂົາວ່າ, "ຂໍພຣະເຈົ້າຊົງສະຖິດຢູ່ນຳພວກເຈົ້າເທີ້ນ" ແລ້ວພວກລູກຈ້າງກໍຕອບວ່າ, "ຂໍພຣະເຈົ້າຊົງອວຍພອນໃຫ້ທ່ານເຫມືອນກັນເທີ້ນ"

5 ແລະໂບອາດໄດ້ຖາມຫົວຫນ້າລູກຈ້າງວ່າ, "ຍິງຜູ້ນັ້ນແມ່ນໃຜ?"

6 ຫົວຫນ້າຈຶ່ງຕອບວ່າ, "ແມ່ນຍິງທີ່ມາຈາກປະເທດໂມອາບນຳນາງນາໂອມີ

7 ນາງໄດ້ມາຂໍອະນຸຍາດນຳຂ້ານ້ອຍ ເພື່ອເກັບຮວງເຂົ້າທີ່ເຮັ່ຍຈາກພວກກ່ຽວເຂົ້າ ດັ່ງນັ້ນ ນາງຈຶ່ງໄດ້ເກັບຕັ້ງແຕ່ເຊົ້າຈົນເຖິງດຽວນີ້ ແລະໄດ້ພັກຜ່ອນແຕ່ພຽງເລັກນ້ອຍເທົ່ານັ້ນ"

8 ເມື່ອໄດ້ຍິນເຊັ່ນນັ້ນ ໂບອາດກໍເວົ້າກັບນາງຣູດວ່າ, "ນາງເອີຍ ເຈົ້າຢ່າໄປເກັບຮວງເຂົ້າບ່ອນອື່ນເດີ ຈົ່ງມາເກັບແຕ່ໃນທົ່ງນານີ້ ແລະເຮັດວຽກຢູ່ນຳຄົນງານຍິງຂອງຂ້ອຍ

9 ຈົ່ງເບິ່ງ ຖ້າພວກເຂົາກ່ຽວເຂົ້າຢູ່ບ່ອນໃດ ເຈົ້າຈົ່ງໄປເກັບຢູ່ບ່ອນນັ້ນ ຂ້ອຍໄດ້ສັ່ງຫ້າມບໍ່ໃຫ້ພວກຜູ້ຊາຍຣົບກວນເຈົ້າ ຖ້າເຈົ້າຫິວນໍ້າຈົ່ງໄປດື່ມໃນໄຫທີ່ພວກລູກຈ້າງໄດ້ຕັກມາໄວ້ແລ້ວນັ້ນ"

10 ເມື່ອໄດ້ຍິນເຊັ່ນນັ້ນ ນາງກໍກົ້ມຂາບລົງ ແລະເວົ້າກັບໂບອາດວ່າ, "ຂ້ານ້ອຍເປັນພຽງຄົນຕ່າງປະເທດ ເປັນຫຍັງທ່ານຈຶ່ງມີຄວາມເມດຕາກະຣຸນາຕໍ່ຂ້ານ້ອຍເຊັ່ນນີ້?"

11 ໂບອາດຈຶ່ງຕອບວ່າ, "ຂ້ອຍໄດ້ຍິນເຣື່ອງທີ່ເຈົ້າປະຕິບັດຕໍ່ຍ່າຕັ້ງແຕ່ຜົວຂອງເຈົ້າໄດ້ຕາຍໄປ ຂ້ອຍໄດ້ຮູ້ວ່າເຈົ້າຈາກພໍ່ແມ່ ແລະບ້ານເກີດເມືອງນອນ ມາຢູ່ໃນປະເທດທີ່ເຈົ້າບໍ່ຮູ້ຈັກມາກ່ອນ

12 ຂໍໃຫ້ພຣະເຈົ້າຊົງຕອບແທນຄຸນຄວາມດີທີ່ເຈົ້າໄດ້ປະຕິບັດມາ ຂໍໃຫ້ພຣະເຈົ້າຂອງພວກອິສຣາເອນ ຜູ້ຊຶ່ງເຈົ້າໄດ້ເພິ່ງພາອາສັຍ ຈົ່ງປະທານບຳເຫນັດອັນປະເສີດໃຫ້ແກ່ເຈົ້າດ້ວຍ"

13 ນາງຣູດກໍຕອບວ່າ, "ທ່ານດີຕໍ່ຂ້ານ້ອຍຫລາຍ ນອກນີ້ທ່ານຍັງໄດ້ເລົ້າໂລມໃຫ້ກຳລັງໃຈແກ່ຂ້ານ້ອຍ ທັງໆທີ່ຂ້ານ້ອຍບໍ່ມີຄຸນຄ່າເທົ່າທຽມກັບຄົນໃຊ້ຍິງຄົນນຶ່ງຂອງທ່ານຊໍ້າ"

14 ເມື່ອເວລາຮັບປະທານອາຫານ ໂບອາດ ບອກນາງຣູດວ່າ, "ຈົ່ງຫຍັບເຂົ້າມາເອົາເຂົ້າຈີ່ ແລ້ວເອົາອາຫານມາຈໍ້ານໍ້າສົ້ມ" ນາງຣູດຈຶ່ງຫຍັບມານັ່ງນຳພວກລູກຈ້າງ ໂບອາດໄດ້ເອົາອາຫານໃຫ້ນາງ ຈົນນາງຮັບປະທານອີ່ມ ແລ້ວຍັງມອບອາຫານທີ່ເຫລືອນັ້ນໃຫ້ອີກດ້ວຍ

15 ຫລັງຈາກຮັບປະທານອາຫານອີ່ມແລ້ວ ກ່ອນນາງຈະໄປເກັບຮວງເຂົ້າຕໍ່ອີກ ໂບອາດໄດ້ສັ່ງລູກຈ້າງວ່າ, “ຈົ່ງອະນຸຍາດໃຫ້ນາງເກັບ
ຮວງເຂົ້າໃນບ່ອນທີ່ຍັງມີຟ່ອນເຂົ້າ
16 ຢ່າລົບກວນນາງ ໃຫ້ພວກເຈົ້າດຶງເອົາເຂົ້າບາງຮວງອອກຈາກມັດປະໄວ້ໃຫ້ນາງເກັບຕາມສະບາຍ ແລະຢ່າເວົ້າຫຍໍ້ຫຍັນຫຍັງໃຫ້ນາງ
ເດີ
17 ນາງຣູດໄດ້ເກັບຮວງເຂົ້າໃນນາຈົນຮອດຄໍ່າ ແລ້ວຟາດເອົາເຂົ້າທີ່ເກັບມານັ້ນໄດ້ປະມານເອຟານຶ່ງ
18 ຫລັງຈາກນັ້ນ ນາງກໍຖືເອົາເຂົ້າກັບຄືນເມືອບ້ານຫາຍ່າໃນເມືອງ ພ້ອມທັງອາຫານທີ່ໂບອັສໃຫ້ມານັ້ນໃຫ້ຍ່າເບິ່ງ
19 ນາງນາໂອມີຈຶ່ງຖາມວ່າ, “ມື້ນີ້ລູກໄດ້ໄປເກັບເຂົ້າຢູ່ບ່ອນໃດ ແມ່ນນາຂອງໃຜທີ່ລູກໄປເຮັດວຽກນຳ ຂໍໃຫ້ພຣະເຈົ້າຊົງອວຍພອນທ່ານ
ຜູ້ມີເມດຕາຈິດເທີນ” ແລ້ວນາງຣູດໄດ້ເວົ້າໃຫ້ຍ່າຟັງວ່າ ນາງໄດ້ໄປເຮັດວຽກໃນນາຂອງທ່ານຜູ້ນຶ່ງຊື່ ໂບອັສ
20 ນາງນາໂອມີຈຶ່ງເວົ້າຂຶ້ນວ່າ, “ຂໍທ່ານຜູ້ນັ້ນຈົ່ງໄດ້ຮັບພອນຈາກອົງພຣະເຈົ້າຜູ້ຊົງປະຕິບັດສັນຍາທີ່ຊົງໃຫ້ໄວ້ກັບຜູ້ຍັງມີຊີວິດ ແລະຜູ້
ຕາຍໄປແລ້ວ” ນາງເວົ້າຕໍ່ໄປອີກວ່າ, “ທ່ານຜູ້ນັ້ນແມ່ນຍາດພີ່ນ້ອງໃກ້ຊິດຂອງເຮົາຊຶ່ງເປັນຜູ້ນຶ່ງທີ່ມີສິດໄຖ່ ແລະອຸປຖັມຄໍ້າຊູພວກ
ເຮົາ”
21 ນາງຣູດຍັງໄດ້ເວົ້າກັບຍ່າອີກວ່າ, “ທ່ານຍັງບອກໃຫ້ຂ້ານ້ອຍຢູ່ກັບລູກຈ້າງຂອງທ່ານຈົນກ່ຽວເຂົ້າແລ້ວ”
22 ນາງນາໂອມີຈຶ່ງຕອບວ່າ, “ແມ່ນແລ້ວລູກເອີຍ, ເປັນການດີຖ້າລູກຢູ່ນຳລູກຈ້າງຂອງທ່ານ ແຕ່ຖ້າລູກໄປນາຂອງຜູ້ອື່ນອາດຈະຖືກຣົບ
ກວນ”
23 ດັ່ງນັ້ນ ນາງຣູດຈຶ່ງຫຽວໄປເຮັດວຽກນຳລູກຈ້າງຂອງໂບອັສຈົນກ່ຽວເຂົ້າແລ້ວ ແຕ່ນາງຍັງຢູ່ກັບແມ່ຍ່າຂອງນາງ

## 3 ໂບອັສເມດຕານາງຣູດ

Ruth and Boaz at the threshing Floor

1 ຄັນຕໍ່ມາ ນາງນາໂອມີໄດ້ກ່າວຕໍ່ນາງຣູດລູກສະໃພ້ຂອງຕົນວ່າ, “ລູກເອີຍ, ແມ່ຄວນຈະຊອກຫາຜົວໃຫ້ເຈົ້າ ເພື່ອຈະມີຄອບຄົວໃຫມ່
ອີກໄດ້ແລ້ວ
2 ເຈົ້າຈົ່ງຮູ້ໄວ້ວ່າ ໂບອັສນາຍຂອງພວກສາວໃຊ້ທີ່ເຈົ້າໄດ້ໄປເຮັດວຽກນຳນັ້ນ ເປັນພີ່ນ້ອງຜູ້ນຶ່ງຂອງພວກເຮົາ ລູກຈົ່ງຟັງໃຫ້ດີ ໃນມື້ແລງ
ນີ້ທ່ານຈະໄປຟາດເຂົ້າໃນລານ
3 ດັ່ງນັ້ນ ເຈົ້າຈົ່ງອາບນໍ້າ ທານໍ້າມັນ ແຕ່ງເນື້ອແຕ່ງຕົວ ແລະນຸ່ງເຄື່ອງອັນງາມທີ່ສຸດ ແລ້ວລົງໄປໃນລານບ່ອນທີ່ທ່ານຟາດເຂົ້ານັ້ນ ແຕ່
ຢ່າໃຫ້ທ່ານຮູ້ຈັກວ່າເຈົ້າຢູ່ຫັ້ນ ຈົນກວ່າທ່ານຮັບປະທານ ແລະດື່ມອີ່ມແລ້ວ
4 ເມື່ອທ່ານໄປນອນ ໃຫ້ເຈົ້າຈື່ບ່ອນທ່ານນອນໄວ້ ແລ້ວໃຫ້ເຈົ້າຄ່ອຍໆເຂົ້າໄປເປີດຜ້າຫົ່ມທີ່ຕີນທ່ານອອກແລ້ວນອນລົງ ໃນເວລານັ້ນ
ທ່ານຈະເວົ້າກັບເຈົ້າໃນສິ່ງທີ່ເຈົ້າຄວນຈະເຮັດ”
5 ນາງຣູດໄດ້ຕອບຍ່າວ່າ, “ຂ້ານ້ອຍຈະເຮັດຕາມທີ່ຍ່າບອກ”
6 ແລ້ວນາງຣູດກໍລົງໄປໃນລານເຂົ້າ ແລະເຮັດຕາມທີ່ຍ່າໄດ້ບອກໄວ້ທຸກປະການ
7 ຫລັງຈາກໂບອາດໄດ້ກິນແລະດື່ມອີ່ມຫນຳສຳຣານໃຈແລ້ວ ທ່ານກໍໄປນອນພັກຜ່ອນຢູ່ໃກ້ໆກອງຟ່ອນເຂົ້າ ນາງຣູດຈຶ່ງຄ່ອຍໆຫຍັບ
ເຂົ້າໄປເປີດຜ້າຫົ່ມທີ່ຕີນທ່ານອອກ ແລ້ວຄ່ອຍໆນອນລົງ
8 ເມື່ອໂບອັສຮູ້ເມື່ອຂຶ້ນໃນເວລາກາງຄືນ ກໍຮູ້ສຶກປະຫລາດໃຈທີ່ເຫັນຜູ້ຍິງມານອນຢູ່ໃຕ້ຕີນຂອງຕົນ
9 ທ່ານຈຶ່ງຖາມຂຶ້ນວ່າ, “ເຈົ້າແມ່ນໃຜ?” ນາງຣູດກໍຕອບວ່າ, “ຂ້ານ້ອຍແມ່ນຣູດສາວໃຊ້ຂອງທ່ານ ຂໍໃຫ້ທ່ານປົກປັກຮັກສາເບິ່ງແຍງຂ້າ
ນ້ອຍແດ່ທ້ອນ ເພາະທ່ານເປັນພີ່ນ້ອງໃກ້ຊິດມີສິດໄຖ່ ແລະອຸປຖັມຄໍ້າຊູຂ້ານ້ອຍ”
10 ໂບອັສໄດ້ເວົ້າວ່າ, “ຂໍໃຫ້ພຣະເຈົ້າອວຍພອນເຈົ້າ ການກະທຳຂອງເຈົ້າ ຄັ້ງນີ້ເປັນທີ່ຫນ້າສັງສານກວ່າຄາວກ່ອນ ຊຶ່ງຊີ້ໃຫ້ເຫັນຄວາມ
ສຸດຈະຣິດທີ່ເຈົ້າມີຕໍ່ຄອບຄົວ ແລະຕໍ່ຍ່າຂອງເຈົ້າ ໂດຍບໍ່ໄດ້ໄປຫຍຸ້ງກ່ຽວກັບຜູ້ບ່າວຄົນອື່ນທີ່ຮັ່ງມີ ຫລືຍາກຈົນ
11 ບັດນີ້ ເຈົ້າບໍ່ຕ້ອງຢ້ານ ຂ້ອຍຈະເຮັດຕາມທີ່ເຈົ້າເວົ້ານັ້ນທຸກຢ່າງ ເພາະທຸກໆຄົນໃນເມືອງນີ້ກໍຮູ້ແລ້ວວ່າເຈົ້າເປັນຍິງດີ
12 ເປັນຄວາມຈິງທີ່ວ່າຂ້ອຍເປັນພີ່ນ້ອງໃກ້ຊິດແລະມີສິດໄຖ່ເຈົ້າ ແຕ່ວ່າຍັງມີພີ່ນ້ອງທີ່ໃກ້ຊິດກວ່າຂ້ອຍອີກຜູ້ນຶ່ງທີ່ມີສິດໄຖ່ເຈົ້າກ່ອນ
13 ເຈົ້າຈົ່ງນອນຢູ່ທີ່ນີ້ກ່ອນ ແລ້ວມື້ອື່ນເຊົ້າຖ້າຜູ້ນັ້ນຫາກຮັບໄຖ່ເຈົ້າ ກໍຈົ່ງໃຫ້ທ່ານກະທຳໄດ້ ແຕ່ຖ້າທ່ານປະຕິເສດ ຂ້ອຍຂໍສາບານຕໍ່ພ
ຣະເຈົ້າຜູ້ຊົງມີຊີວິດຢູ່ວ່າ ຂ້ອຍຈະຮັບຜິດຊອບໃນເຣື່ອງນີ້ເອງ ເຈົ້າຈົ່ງຫລັບນອນໃຫ້ສະບາຍໃຈເທີນ”

14 ຄືນນັ້ນ ນາງໄດ້ນອນໃຕ້ຕີນຂອງໂບອັສຈົນຂ້ອນແຈ້ງ ແຕ່ນາງໄດ້ລຸກກ່ອນຄົນຈະເຫັນໜ້າ ໂບອັສຈຶ່ງເວົ້າວ່າ, "ຄົງບໍ່ມີຜູ້ໃດຮູ້ວ່ານາງ
ມາທີ່ນີ້ດອກ"
15 ຄັນແລ້ວ ໂບອັສໄດ້ເວົ້າຕໍ່ນາງວ່າ, "ຈົ່ງເອົາເສື້ອຊັ້ນນອກທີ່ເຈົ້ານຸ່ງນັ້ນພືອອກ" ນາງຣູດກໍເຮັດຕາມ ໂບອັສຈຶ່ງຜອງເຂົ້າໃຫ້ນາງຫົກ
ຫົວໜ່ວຍຊັ່ງຂອງເຂົ້າບເລ ນາງໄດ້ແບກເອົາເຂົ້າແລ້ວກັບຄືນເມືອເມືອງ
16 ເມື່ອນາງກັບມາເຖິງບ້ານ ຍ່າກໍຖາມວ່າ, "ເປັນແນວໃດລູກ?" ນາງຣູດກໍເລົ່າເຣື່ອງທຸກຢ່າງທີ່ໂບອັສໄດ້ເວົ້າ ແລະໄດ້ເຮັດຕໍ່ນາງສູ່ຍ່າ
ຟັງ
17 ນາງໄດ້ເວົ້າວ່າ, "ທ່ານຍັງໄດ້ເອົາເຂົ້າຫົກຫົວໜ່ວຍຊັ່ງຂອງເຂົ້າບເລນີ້ໃຫ້ ເພາະທ່ານບໍ່ຢາກໃຫ້ຂ້ານ້ອຍກັບມາມືເປົ່າ"
18 ນາງນາໂອມີຈຶ່ງເວົ້າວ່າ, "ລູກຈົ່ງສະບາຍໃຈເທີ້ນ ຕົກມາຮອດນີ້ລູກກໍຄົງຈະຮູ້ແລ້ວວ່າ ເຣື່ອງມັນຈະຈົບລົງແນວໃດ ເພາະໂບອັສຄົງ
ຈະບໍ່ສະບາຍໃຈ ຖ້າບໍ່ໄດ້ຈັດການກັບເຣື່ອງນີ້ໃຫ້ຮຽບຮ້ອຍໃນມື້ນີ້"

## 4 ໂບອັສເອົາຣູດເປັນພັຣຍາ

The Marriage of Boaz and Ruth

1 ໂບອັສໄດ້ໄປນັ່ງຢູ່ໃນຫໍປະຊຸມທີ່ປະຕູເຂົ້າເມືອງ ໃນຂນະນັ້ນພໍດີກັບພີ່ນ້ອງຜູ້ໃກ້ຊິດກັບເອລີເມເລກ ຜູ້ມີສິດໄຖ່ແລະອຸປຖັມຄໍ້າຊູທີ່
ທ່ານເວົ້ານັ້ນຍ່າງຜ່ານມາ ໂບອັສຈຶ່ງຖືໂອກາດເຊື້ອເຊີນເຂົານັ່ງລົງ
2 ນອກນີ້ທ່ານຍັງໄດ້ເຊື້ອເຊີນພວກເຖົ້າແກ່ໃນເມືອງສິບຄົນມາຮ່ວມດ້ວຍ ເມື່ອມາພ້ອມພຽງກັນແລ້ວ
3 ໂບອັສກໍເວົ້າກັບພີ່ນ້ອງຂອງເອລີເມເລກວ່າ, "ບັດນີ້ ນາງນາໂອມີໄດ້ກັບມາແຕ່ປະເທດໂມອາບ ມາຮອດບ້ານເກີດເມືອງນອນແລ້ວ
ນາງຕ້ອງການຂາຍດິນຂອງເອລີເມເລກ ຜູ້ເປັນຍາດພີ່ນ້ອງຂອງພວກເຮົາ
4 ຂ້ອຍໄດ້ຕັດສິນໃຈຄັກແນ່ແລ້ວທີ່ຈະເວົ້າເຣື່ອງນີ້ກັບເຈົ້າ ຄືວ່າຖ້າເຈົ້າຕ້ອງການຢາກຊ່ວຍຍົກຊື່ສຽງຂອງຜູ້ທີ່ຕາຍໄປແລ້ວ ຈົ່ງຕັດ
ສິນໃຈຊື້ດິນນີ້ເສັຽຕໍ່ໜ້າພວກເຖົ້າແກ່ທີ່ນັ່ງຢູ່ນີ້ ເພື່ອເປັນພຍານຫລັກຖານໃຫ້ ແຕ່ຖ້າເຈົ້າບໍ່ຕ້ອງການຈົ່ງໄດ້ບອກໃຫ້ຂ້ອຍຮູ້ ເພາະວ່າ
ສິດທິໃນການຊື້ນັ້ນເປັນຂອງເຈົ້າກ່ອນ ແລ້ວຈຶ່ງເປັນຂອງຂ້ອຍຕາມພາຍຫລັງ" ຊາຍຜູ້ນັ້ນໄດ້ເວົ້າຂຶ້ນວ່າ, "ຂ້ອຍຍິນດີຈະຊື້ດິນນັ້ນ"
5 ໂບອັສຈຶ່ງເວົ້າຂຶ້ນວ່າ, "ຖ້າເຈົ້າຊື້ດິນຈາກນາງນາໂອມີ ນາງຣູດຊຶ່ງເປັນແມ່ໝ້າຍຕ້ອງເປັນເມັຽຂອງເຈົ້າ ແລະດິນທີ່ເຈົ້າຈະຊື້ຕ້ອງຕົກ
ເປັນຂອງຄອບຄົວຂອງຜູ້ທີ່ຕາຍແລ້ວນັ້ນ"
6 ຊາຍຜູ້ນັ້ນກໍຕອບວ່າ, "ຖ້າເປັນຢ່າງນີ້ ຂ້ອຍກໍບໍ່ສາມາດຈະຊື້ໄດ້ ເພາະການຊື້ອາດຈະເຮັດໃຫ້ມໍຣະດົກຂອງຂ້ອຍເອງສູນເສັຽໄປ ເຈົ້າ
ຈົ່ງໃຊ້ສິດທິຂອງຂ້ອຍຊື້ດິນນັ້ນເສັຽເທີ້ນ ຂ້ອຍບໍ່ຕ້ອງການອີກແລ້ວ"
7 ໃນສມັຍກ່ອນ ຣາຊອານາຈັກອິສຣາເອນມີທຳນຽມຢູ່ວ່າ ເມື່ອຜູ້ນຶ່ງມອບສິດທິໃຫ້ຜູ້ນຶ່ງອີກ ຫລືແລກປ່ຽນຊື້ຂາຍກັນ ຜູ້ຂາຍຕ້ອງປົດ
ເກີບສົ່ງໃຫ້ຜູ້ຊື້ ການກະທຳເຊັ່ນນີ້ ໃຊ້ເປັນພຍານຫລັກຖານທີ່ນິຍົມກັນໃນຣາຊອານາຈັກອິສຣາເອນ
8 ດັ່ງນັ້ນ ຍາດຂອງເອລີເມເລກຜູ້ມີສິດທິໃນການໄຖ່ຈຶ່ງເວົ້າວ່າ, "ເຈົ້າຈົ່ງຊື້ສິ່ງເຫລົ່ານີ້ເສັຽເທີ້ນ" ແລ້ວເຂົາກໍໄດ້ປົດເກີບໃຫ້ແກ່ໂບອັສ
9 ໂບອັສຈຶ່ງກ່າວກັບພວກເຖົ້າແກ່ ແລະພວກທີ່ມາຮ່ວມໃນພິທີນັ້ນວ່າ, "ມື້ນີ້ທ່ານທັງຫລາຍຈົ່ງເປັນພຍານໃຫ້ຂ້າພະເຈົ້າດ້ວຍວ່າ ຂ້າ
ພະເຈົ້າໄດ້ຊື້ທຸກສິ່ງທຸກຢ່າງຂອງເອລີເມເລກຂອງກີລີໂອນ ແລະຂອງມາໂລນຈາກນາງນາໂອມີແລ້ວ
10 ນອກຈາກນີ້ ນາງຣູດຊາວໂມອາບພັຣຍາຂອງມາໂລນຜູ້ ທີ່ຕາຍໄປແລ້ວ ກໍຕົກເປັນພັຣຍຂອງຂ້າພະເຈົ້ານຳດ້ວຍ ຂ້າພະເຈົ້າຢາກໃຫ້
ມໍຣະດົກມີຢູ່ໃນຄອບຄົວຂອງຜູ້ທີ່ຕາຍ ເພື່ອໃຫ້ຊື່ຂອງເຂົາຍັງມີຢູ່ໃນຖ້າມກາງຍາດພີ່ນ້ອງແລະບ້ານເມືອງ ຂໍໃຫ້ທ່ານຈົ່ງເປັນພຍານ
ຕໍ່ເຫດການໃນມື້ນີ້ດ້ວຍ"
11 ພວກປະຊາຊົນທີ່ຢູ່ໃນທີ່ນັ້ນກໍພ້ອມກັນຕອບວ່າ, "ພວກເຮົາຍິນດີເປັນພຍານໃຫ້" ຝ່າຍພວກເຖົ້າແກ່ກໍເວົ້າວ່າ, "ຂໍພຣະຜູ້ເປັນເຈົ້າຊົງ
ໂຜດຊ່ວຍໃຫ້ຍິງທີ່ຈະໄປຢູ່ບ້ານຂອງເຈົ້ານັ້ນ ເປັນເໝືອນນາງຣາເຊັນແລະນາງເລອາ ຜູ້ຊຶ່ງມີລູກຫລານຫລາຍສືບເຊື້ອສາຍໃຫ້ແກ່
ຣາຊອານາຈັກອິສຣາເອນ ຂໍໃຫ້ເຈົ້າເປັນຜູ້ຮັ່ງມີໃນ ເອຟຣາທາ ແລະມີຊື່ສຽງໂດ່ງດັງໃນເມືອງເບັດເລເຮັມເທີ້ນ
12 ຂໍໃຫ້ເດັກນ້ອຍທີ່ພຣະຜູ້ເປັນເຈົ້າໂຜດປະທານໃຫ້ເຈົ້າຈາກຍິງສາວຄົນນີ້ ຈົ່ງເປັນເໝືອນຄອບຄົວຂອງເປເຣດບຸດຊາຍຂອງຢູດາ
ແລະນາງທາມາເທີ້ນ

The Genealogy of David

(ມທ 1:2-6)

13 ແລ້ວໂບອັສກໍເອົານາງຣູດມາເປັນເມັຽ ແລະສົມສູ່ຢູ່ກິນດ້ວຍກັນ

14 ຕໍ່ມາ ພຣະເຈົ້າໄດ້ຊົງໂຜດໃຫ້ນາງຕັ້ງທ້ອງ ແລະໄດ້ບຸດຊາຍຜູ້ນຶ່ງ
15 ຜູ້ຍິງທັງຫລາຍໃນເມືອງເບັດເລເຮັມຈຶ່ງເວົ້າກັບນາງນາໂອມິວ່າ, “ຈົ່ງຂອບພຣະຄຸນພຣະຜູ້ເປັນເຈົ້າເທີນ ເພາະພຣະອົງຊົງໂຜດໃຫ້
ເຈົ້າມີຫລານຊາຍ ຜູ້ຈະບົວລະບັດຮັກສາເຈົ້າ ຂໍໃຫ້ເດັກນ້ອຍຜູ້ນີ້ມີຊື່ສຽງໂດ່ງດັງໃນຣາຊອານາຈັກອິສຣາເອນ ເປັນກຳລັງໃຈ ແລະ
ເປັນຜູ້ຄຸ້ມຄອງຮັກສາເຈົ້າໃນເວລາເຖົ້າແກ່ ລູກສະໃພ້ຜູ້ເປັນແມ່ຂອງເດັກນ້ອຍນີ້ຮັກເຈົ້າຫລາຍ ນາງສາມາດບົວລະບັດຮັກສາເຈົ້າ
ໄດ້ດີກວ່າບຸດຊາຍເຈັດຄົນຂອງເຈົ້າ”
16 ນາງນາໂອມີໄດ້ເອົາໃຈໃສ່ເບິ່ງແຍງ ແລະລ້ຽງເກືອຫລານຊາຍຜູ້ນີ້ເປັນຢ່າງດີ
17 ພວກຜູ້ຍິງບ້ານໃກ້ເຮືອນຄຽງໄດ້ຕັ້ງຊື່ໃຫ້ເດັກນ້ອຍຜູ້ນັ້ນວ່າ ໂອເບດ ພວກເຂົາພາກັນເວົ້າວ່າ, “ເດັກນ້ອຍນີ້ແມ່ນບຸດນາງນາໂອມີ”
ຕໍ່ມາ ໂອເບດໄດ້ເປັນບິດາຂອງເຈສຊີ ແລະເຈສຊີໄດ້ເປັນບິດາຂອງດາວິດ
18 ເຊື້ອສາຍຂອງດາວິດ ນັບຕັ້ງແຕ່ເປເຣສມາມີດັ່ງນີ້, ເປເຣສເປັນບິດາເຮສໂຣນເຮສໂຣນເປັນບິດາຣາມ ຣາມເປັນບິດາອັມມີນາ
ດາບອັມມີນາດາບເປັນບິດານາໂຊນ ນາໂຊນເປັນບິດາຊັນໂມນຊັນໂມນເປັນບິດາຂອງໂບອັສ ໂບອັສ ໂບອັສເປັນບິດາຂອງໂອ
ເບດໂອເບດເປັນບິດາຂອງເຈສຊີ ເຈສຊີເປັນບິດາດາວິດ